*ການສ້າງຕັ້ງ*
*ຖານະຄວາມເປັນພໍ່*
*ເພື່ອຜົນປະໂຍດຂອງເດັກ...*



# ແມ່ນຫຍັງ ທີ່ພໍ່ແມ່ທຸກຄົນ ຄວນຮູ້

*ພໍ່ແມ່ທັງສອງຄວນເພື່ອແຜ່ ເຈືອຈານແກ່ຄວາມຕ້ອງການ ຈຳເປັນຕ່າງໆແກ່ເດັກຂອງ ເຂົາເຈົ້າ. ເດັກທຸກຄົນມີສິດທີໄດ້ ຮັບຄວາມເປັນພໍ່ທີ່ຖືກຕ້ອງຕາມ ກົດໝາຍ, ຮູ້ວ່າໃຜເປັນພໍ່, ແລະ ຫວງສິດທິຕ່າງໆພ້ອມທັງຜົນ ປະໂຍດຕ່າງໆທີ່ຕິດຕາມມາ ພ້ອມກັບຄວາມຮູ້ນີ້.*

Washington State
Department of Social & Health Services
DCS Division of Child Support

## ຖານະຄວາມເປັນພໍ່ນັ້ນແມ່ນຫຍັງ?

ຄຳວ່າຖານະຄວາມເປັນພໍ່ນັ້ນ ຕາມກົດໝາຍແລ້ວຄວາມຈິງແມ່ນໝາຍເຖິງຊາຍຜູ້ເປັນພໍ່ຂອງເດັກ (ພໍ່).

## ເປັນຫຍັງຂ້າພະເຈົ້າຈຶ່ງຈຳເປັນຕ້ອງໄດ້ສ້າງຕັ້ງຖານະຄວາມເປັນພໍ່ຂຶ້ນ?

ມັນເປັນສິ່ງສຳຄັນທີ່ຈຳຕ້ອງຄິດຄົ້ນຄວາມສຳພັນຕາມກົດໝາຍຣະຫວ່າງພໍ່ແລະເດັກຜູ້ໃດຜູ້ໜຶ່ງຂຶ້ນ. ການມີພໍ່ຕາມກົດໝາຍນັ້ນແມ່ນມີຜົນປະໂຍດຫລາຍຢ່າງແກ່ເດັກ. ຜົນປະໂຍດຕ່າງໆເຫລົ່ານັ້ນກໍ່ຄື:

- ທ່ານໝໍປະຈຳຄອບຄົວສາມາດຊ່ວຍເດັກດີກວ່າເກົ່າເມື່ອເພິ່ນຮູ້ປະວັດສຸຂະພາບຄອບຄົວຂອງເດັກຢ່າງຄົບຖ້ວນ.
- ຜົນປະໂຍດການຊ່ວຍເຫລືອຕ່າງໆຂອງຣັດຖະບານເພື່ອຜູ້ເພິ່ງພາ ເຊັ່ນເງິນປະກັນສັງຄົມ, ແລະເງິນເບັ້ຽລ້ຽງນັກຣົບເກົ່າຕ່າງໆອາດມີໄວ້ໃຫ້ເດັກ.
- ການປະກັນໄພສຸຂະພາບສຳຣັບເດັກອາດມີໃຫ້ເດັກ ໂດຍຜ່ານແຜນປະກັນໄພສຸຂະພາບຂອງພໍ່.
- ນະໂຍບາຍແຜນປະກັນໄພຊີວິດຕ່າງໆແລະຜົນປະໂຍດມູນມໍຣະດົກຕ່າງໆຄວນມີໄວ້ໃຫ້.
- ພໍ່ແມ່ທັງສອງຝ່າຍເປັນຜູ້ໃຫ້ຄວາມອູ້ມຊູດ້ານການເງິນ.

## ຂ້າພະເຈົ້າຈະສ້າງຕັ້ງຖານະຄວາມເປັນພໍ່ໄດ້ແນວໃດ?

ມີສາມວິຖີທາງໃນການສ້າງຕັ້ງຖານະຄວາມເປັນພໍ່ຕາມກົດໝາຍ.

### ການແຕ່ງງານ

ຖ້າພໍ່ແມ່ແຕ່ງງານກ່ອນການເກີດຂອງເດັກ, ການແຕ່ງງານນັ້ນແມ່ນເຮັດໃຫ້ເກີດ "ຄວາມເປັນພໍ່ໂດຍການຄາດຄຳນຶງໄວ້" ກັບຜູ້ເປັນຜົວ. ໝາຍຄວາມວ່າຜົວຜູ້ນັ້ນເປັນພໍ່ຂອງເດັກຕາມກົດໝາຍ. ພໍ່ແມ່ຫລືບຸກຄົນທີ່ສົນໃຈສາມາດຕໍ່ວ່າເຣື່ອງຄວາມເປັນພໍ່ໂດຍການຄາດຄຳນຶງໄວ້ນີ້ຢູ່ໃນສານໄດ້.

### ຄຳໃຫ້ການຖານະຄວາມເປັນພໍ່ຂອງສານ

ຄຳໃຫ້ການຖານະຄວາມເປັນພໍ່ຂອງສານນັ້ນເປັນຮູບການດ້ານກົດໝາຍອັນເປັນສ່ວນໜຶ່ງຂອງຄວາມຮັບຮູ້ຣະບົບຖານະຄວາມເປັນພໍ່. ກົດໝາຍຂອງຣັດຮັບຮູ້ຜູ້ຊາຍທີ່ເຊັນຊື່ໃສ່ເອກະສານເພື່ອຮັບຮູ້ຄວາມເປັນພໍ່ຂອງເດັກ. ພໍ່ແມ່ທັງສອງຝ່າຍຕ້ອງໄດ້ເຊັນຊື່ໃສ່ເອກະສານນີ້ແລະຈຳຕ້ອງປະທັບຕາຮັບຮູ້ມວນຊົນແລ້ວເກັບໄວ້ເປັນເອກະສານຫລັກຖານກັບກົມສຸຂະພາບມວນຂອງຣັດວໍຊິງຕັນ, ສູນກາງສະຖິຕິສຸຂະພາບ (DOH). ທາງໂຮງໝໍສາມາດໃຫ້ການບໍຣິການປະທັບຕາມວນຊົນຢັ້ງຢືນແລະສິ່ງ ເອກະສານ DOH ໃຫ້ທ່ານ. DOH ຈະບອກຊື່ຜູ້ຊາຍທີ່ເຊັນຊື່ຮັບຮູ້ນີ້ໃຫ້ເປັນພໍ່ຕາມກົດໝາຍຢູ່ໃນໃບຢັ້ງຢືນການເກີດຂອງເດັກນັ້ນ.

*ຄຳສັ່ງຂອງສານ*

ສານຕັດສິນພິຈາຣະນາວ່າຜູ້ຊາຍຄົນໃດໜຶ່ງເປັນພໍ່ຂອງເດັກ. ເພື່ອທຳການຕັດສິນໄດ້ນັ້ນໂດຍທົ່ວໄປແລ້ວທາງສານຈະຮຽກຮ້ອງໃຫ້ກວດສາຍເລືອດຂອງແມ່, ຂອງພໍ່, ແລະຂອງເດັກ.

# ການສ້າງຕັ້ງຖານະຄວາມເປັນພໍ່<br>ດ້ວຍການໃຊ້ຮ່າງໜັງສືເອກະສານຄຳໃຫ້ການຄວາມເປັນພໍ່

## ເປັນຫຍັງຂ້າພະເຈົ້າຈຶ່ງຈຳຕ້ອງເຊັນໜັງສືຄຳໃຫ້ການຄວາມເປັນພໍ່**?**

ໜັງສືເອກະສານນັ້ນແມ່ນວິທີງ່າຍດາຍ, ໄວ, ຖືກຕາມກົດໝາຍແລະຄ່າໃຊ້ຈ່າຍກໍ່ຕ່ຳໃນການສ້າງຕັ້ງຖານະຄວາມເປັນພໍ່. ໃຫ້ເຊັນໜັງສືເອກະສານຢັ້ງຢືນນີ້ທໍ່ນັ້ນ ຖ້າຫາກຜູ້ຊາຍຄົນນັ້ນແລະຜູ້ເປັນແມ່ໝັ້ນໃຈວ່າຜູ້ຊາຍຄົນນັ້ນທໍ່ນັ້ນທີ່ຄາດວ່າເປັນພໍ່ຂອງເດັກແທ້ຈິງ.

## ຂ້າພະເຈົ້າຈະເຊັນໜັງສືຄຳໃຫ້ການຄວາມເປັນພໍ່ນີ້ຢູ່ໃສ**?**

ພໍ່ແມ່ສ່ວນຫລາຍແມ່ນເຊັນໜັງສືນີ້ຢູ່ໂຮງໝໍບ່ອນທີ່ເດັກເກີດ, ຫ້ອງພະຍາບານທີ່ເດັກເກີດ, ຫລືຢູ່ໃນບ້ານພາຍໃຕ້ຄວາມດູແລຂອງນາງພະດຸງຄັນ.

- ຖ້າທ່ານຕ້ອງການໃຫ້ຊ່ວຍ, ທາງໂຮງໝໍ, ນາງພະດຸງຄັນ, ຫລືພະນັກງານບ່ອນຫ້ອງພະຍາບານເກີດເດັກນັ້ນສາມາດຕອບຄຳຖາມຕ່າງໆຂອງທ່ານ, ຊ່ວຍທ່ານຕື່ມໜັງສືເອກະສານນັ້ນ, ປະທັບຕາຢັ້ງຢືນເອກະສານ, ແລະສົ່ງໜັງສືເອກະສານນັ້ນໄປ DOH ໃຫ້. ຫ້ອງການ DCS ຕ່າງໆ, ທະນາຄານຕ່າງໆ, ແລະກົມສາທາຣະນະສຸກເຂດທ້ອງຖິ່ນຕ່າງໆກໍ່ສາມາດປະທັບຕາຢັ້ງຢືນເອກະສານນັ້ນໃຫ້ໄດ້.

- ຖ້າທ່ານເຊັນໜັງສືສ້າງຕັ້ງຖານະຄວາມເປັນພໍ່ພາຍໃນ 5 ມື້ ຂອງການເກີດຂອງເດັກ, ທ່ານບໍ່ອາດຈຳເປັນຕ້ອງຈ່າຍຄ່າທຳນຽມການປະກອບເອກະສານ.

- ຖ້າທ່ານບໍ່ເຊັນໜັງສືເອກະສານຢູ່ໂຮງໝໍ, ທ່ານກໍ່ໄປເອົາຮ່າງໜັງສືເອກະສານນັ້ນໄດ້ຕາມຫ້ອງການສາທາຣະນະສຸກປະຈຳເຂດຄາວຕີ້ຂອງທ່ານ ຫລືຕາມຫ້ອງການເກັບເງິນລ້ຽງເດັກ (DCS). ໃຫ້ໂທຫາ DCS ໃນເລກ 800-442-KIDS (5437) ແລະໃຫ້ຖາມຜູ້ຮັບແຂກໜ້າໂຕະສົ່ງຮ່າງໃບເອກະສານທາງໄປສະນີໃຫ້ທ່ານ.

## ຂ້າພະເຈົ້າຈະຂໍເອົາສຳເນົາໜັງສືເອກະສານຄຳໃຫ້ການຄວາມເປັນພໍ່ຂອງຂ້າພະເຈົ້າໄດ້ບໍ່**?**

ໄດ້, ຫ້ອງການ DOH ເປັນຜູ້ເກັບມ້ຽນບັນທຶກເອກະສານທາງການຕ່າງໆ. ໃຫ້ໂທຫາ DOH ໃນເລກ 360-236-4300 ແລະໃຫ້ຖາມເອົາສຳເນົາຫລືຖາມເອົາມື້ທີ່ DOH ປະກອບເອກະສານ. DOH ຄິດຄ່າທຳນຽມເພື່ອເອົາສຳເນົາຕ່າງໆ.

## ສິດທິຕ່າງໆທາງກົດໝາຍຂອງຂ້າພະເຈົ້າມີຫຍັງແດ່ ຖ້າຂ້າພະເຈົ້າຫາກເຊັນໜັງສືຄຳໃຫ້ການຄວາມເປັນພໍ່?

ເມື່ອທ່ານເຊັນໜັງສືໃດໜຶ່ງ, ກົດໝາຍຂອງປະເທດບົ່ງບອກສະເໝີວ່າ ທ່ານຈຳຕ້ອງໄດ້ຮັບຂ່າວຂໍ້ມູນເປັນການຂີດຂຽນແລະທາງປາກເປົ່າທັງສອງຢ່າງເຖິງສິດທິແລະຄວາມຮັບຜິດຊອບຕ່າງໆຂອງທ່ານ. ບົດວ່າດ້ວຍສິດທິແລະຄວາມຮັບຜິດຊອບຕ່າງໆຂອງທ່ານແມ່ນຢູ່ດ້ານຫລັງຂອງເອກະສານໃບນີ້. ມັນເປັນສິ່ງສຳຄັນທີ່ທ່ານຕ້ອງເຂົ້າໃຈວ່າມັນເວົ້າຫຍັງແດ່.

ໃຫ້ອ່ານບົດຄວາມນັ້ນແລະໃຫ້ເຮັດສິ່ງໃດໜຶ່ງຢູ່ລຸ່ມນີ້:

- ໃຫ້ເບິ່ງວີດີໂອຢູ່ໂຮງໝໍ, ຫ້ອງພະຍາບານເກີດລູກ, ຫ້ອງການສາທາລະນະສຸກທ້ອງຖິ່ນຂອງທ່ານ, ຫລືຫ້ອງການ DCS.
- ໃຫ້ຟັງສຽງເວົ້າອັດຕະໂນມັດເຖິງບົດຂ່າວສານວ່າດ້ວຍຄຳໃຫ້ການຄວາມເປັນພໍ່ຂອງສານ ໂດຍໂທເລກ 800-356-0463.
- ຂໍໃຫ້ຜູ້ໃດຜູ້ໜຶ່ງອ່ານບົດຄວາມນັ້ນໃຫ້ທ່ານຟັງ.

ຢ່າເຊັນໜັງສືເອກະສານ
ຈົນກວ່າທ່ານໄດ້ຮັບແລະເຂົ້າໃຈເຖິງ
ຂ່າວຂໍ້ມູນທາງການຂີດຂຽນ
ແລະທາງປາກເປົ່າທັງສອງຢ່າງ.

## *ຂ້າພະເຈົ້າຈະເຊັນໜັງສືຄຳໃຫ້ການຄວາມເປັນພໍ່ໄດ້ບໍ່ ທັງໆທີ່ຂ້າພະເຈົ້າມີອາຍຸຕ່ຳກວ່າ 18 ປີ?*

ໄດ້, ໜັງສືຄຳໃຫ້ການຄວາມເປັນພໍ່ທີ່ເຊັນໂດຍຜູ້ບໍ່ທັນພົ້ນກະສຽນນັ້ນກໍ່ຖືວ່າຖືກຕ້ອງຕາມກົດໝາຍ. ກົດໝາຍຮັດຖືຜູ້ບໍ່ພົ້ນກະສຽນທັງຫລາຍ (ຊາຍແລະຍິງທີ່ອາຍຸຕ່ຳກວ່າ 18 ປີ) ທີ່ເຊັນໜັງສືເອກະສານວ່າເປັນລະດັບດຽວກັນກັບຜູ້ໃຫຍ່ທັງຫລາຍ.

## ຖ້າຂ້າພະເຈົ້າຫາກບໍ່ໝັ້ນໃຈວ່າຂ້າພະເຈົ້າຢາກເຊັນໜັງສືຄຳໃຫ້ການຄວາມເປັນພໍ່ຂອງສານເດ?

ໃຫ້ເຊັນໜັງສືເອກະສານເມື່ອທ່ານຫາກໝັ້ນໃຈວ່າທ່ານອາດເປັນພໍ່ທີ່ແທ້ຈິງຂອງເດັກທໍ່ນັ້ນ. ທ່ານສາມາດລົມກັບທະນາຍກໍ່ໄດ້. ຖ້າທ່ານຕັດສິນໃຈວ່າທ່ານບໍ່ເຊັນໜັງສືເອກະສານນັ້ນ, ທ່ານສາມາດຂໍໃຫ້ສານສ້າງຕັ້ງຖາມະຄວາມເປັນພໍ່ຂຶ້ນ. ຖ້າທ່ານມີຄຳຖາມໃດໜຶ່ງ, ໃຫ້ທ່ານໂທຫາຫ້ອງການ DCS. ຫ້ອງການ DCS ບໍ່ສາມາດໃຫ້ຄຳແນະນຳດ້ານກົດໝາຍແກ່ທ່ານໄດ້.

## ຂ້າພະເຈົ້າສາມາດປ່ຽນໃຈໄດ້ບໍ່ພາຍຫລັງທີ່ເຊັນເອກະສານຄຳສັ່ງນັ້ນແລ້ວ?

ບໍ່ວ່າຝ່າຍຊາຍຫລືຍິງແມ່ນສາມາດຂໍໃຫ້ທາງສານເອົາຊື່ອອກຈາກບັນທຶກຂອງສານໄດ້. ທ່ານຕ້ອງຮ້ອງຂໍຂຶ້ນຫາສານພາຍໃນ 60 ມື້ພາຍຫລັງການປະກອບເອກະສານຂອງຫ້ອງການ DOH. ຄຳເວົ້າທາງກົດໝາຍສຳຣັບການຖອນຊື່ຂອງທ່ານອອກຈາກບັນທຶກການເກີດນັ້ນເອີ້ນວ່າ “ການຖອນຕົວ.”

ຖ້າທ່ານຈະໄປສານເພື່ອເອົາຊື່ຂອງທ່ານອອກຈາກບັນທຶກເອກະສານການເກີດ, ໃນຖານະເປັນພໍ່ຂອງເດັກ, ທ່ານຕ້ອງຖາມເອົາສຳເນົາໃບຢັ້ງຢືນນຳ DOH ພ້ອມ. ເພື່ອໃຫ້ໄດ້ສຳເນົາໃບຢັ້ງຢືນນັ້ນ, ທ່ານຈຳຕ້ອງໃຫ້ສິ່ງພິສູດຢັ້ງຢືນຕົວຂອງທ່ານເອງແລະເສັຽຄ່າທຳນຽມ. ໃຫ້ໂທຫາ DOH ເພື່ອຊອກຮູ້ຈຳນວນຄ່າທຳນຽມນັ້ນ.

## ຂ້າພະເຈົ້າຈຳຕ້ອງຈ້າງທະນາຍບໍ່ເພື່ອຖອນຊື່ຂອງຂ້າພະເຈົ້າອອກຈາກບັນທຶກການເກີດນັ້ນ?

ທ່ານຕ້ອງປະກອບເອກະສານຂໍຮ້ອງກັບສານເພື່ອຖອນຊື່ຂອງທ່ານອອກຈາກບັນທຶກການເກີດ. ທ່ານສາມາດເຮັດເຣື່ອງນີ້ໄດ້ດ້ວຍຕົນເອງຫລືຈາກການຊ່ວຍເຫລືອຂອງທະນາຍ. ຖ້າສານອະນຸຍາດໃຫ້ທ່ານຖອນຊື່ອອກໄດ້, DOH ຈະເອົາຊື່ຂອງທ່ານອອກຈາກໃບຢັ້ງຢືນການເກີດໃຫ້.

## ຖ້າຂ້າພະເຈົ້າຫາກປ່ຽນໃຈ ແລະ 61 ມື້ຫລືຫລາຍກວ່າຫລັງຈາກມື້ປະກອບເອກະສານຄຳສັ່ງຂອງສານເດ?

ບໍ່ວ່າຊາຍຫລືຍິງກໍ່ສາມາດຮ້ອງຂໍຕໍ່ຂານກັບຄຳສັ່ງນັ້ນຢູ່ສານໄດ້ຄືກັນ. ທ່ານຈຳຕ້ອງຢັ້ງຢືນຕໍ່ສານວ່າທ່ານໄດ້ເຊັນໜັງສືລົງໄປນັ້ນກໍ່ຍ້ອນການສໍ້ໂກງ, ການຂົ່ມຂູ່, ຫລືວັດຖຸທີ່ບິດເບືອນຄວາມຈິງ. “ວັດຖຸທີ່ບິດເບືອນຄວາມຈິງ” ນັ້ນເປັນຄວາມເວົ້າທາງກົດໝາຍເຖິງວິທີທີ່ທ່ານເຊັນຄຳສັ່ງຂອງສານຍ້ອນທ່ານເຊື່ອວ່າເດັກຜູ້ນັ້ນເປັນລູກຂອງທ່ານແຕ່ມາບັດນີ້ທ່ານໄດ້ຮູ້ບາງຢ່າງກ່ຽວກັບຄວາມສຳພັນຂອງທ່ານກັບຜູ້ເປັນແມ່ຂອງເດັກຫລືການຖືພາຕັ້ງທ້ອງນັ້ນມັນເຮັດໃຫ້ທ່ານເຊື່ອໃນເຣື່ອງນີ້ວ່າບໍ່ເປັນຄວາມຈິງ.

ທ່ານບໍ່ສາມາດຮ້ອງທວງຖາມ
ຕໍ່ຄຳໃຫ້ການຖານະຄວາມເປັນພໍ່ຂອງສານໄດ້
ຖ້າຫາກເວລາລ່ວງໄປເກີນ 2 ປີ
ຫລັງຈາກວັນທີຂອງການປະກອບເອກະສານ

### ຖ້າແມ່ຫາກແຕ່ງງານກັບຄົນອື່ນອີກເດຈະເປັນແນວໃດ?

ຖ້າແມ່ຫາກແຕ່ງງານກັບຊາຍຄົນອື່ນໃນໄລຍະຖືພາ, ຜົວກໍ່ຄາດຄະເນ (ເຊື່ອວ່າ) ແລະເຊື່ອວ່າເປັນພໍ່ ຖ້າເດັກຫາກເກີດ:

- ໃນຊ່ວງການແຕ່ງງານນັ້ນ
- ຫລືພາຍໃນ 300 ມື້ຂອງມື້ສິ້ນສຸດການແຕ່ງງານ.

ຖ້າຜົວຂອງແມ່ຫາກຕົກລົງເພື່ອໃຫ້ຊາຍຄົນອື່ນເຊັນຊື່ໃນນາມເປັນພໍ່, ຜູ້ຊາຍທີ່ຫວງຄວາມເປັນພໍ່ອາດເຊັນຄຳສັ່ງຂອງສານໃນຖານະເປັນພໍ່. ຜົວຂອງຜູ້ເປັນແມ່ຕ້ອງເຊັນໜັງສືປະຕິເສດຄວາມເປັນພໍ່ ຫລືຄຳສັ່ງຂອງສານຖານຄວາມເປັນພໍ່ນັ້ນບໍ່ຖືວ່າຖືກກົດໝາຍ. ທ່ານຕ້ອງປະກອບເອກະສານທັງສອງຢ່າງຄືຄຳສັ່ງຂອງສານແລະໜັງສືປະຕິເສດກັບຫ້ອງການ DOH ພາຍໃນສິບມື້ຂອງມື້ທີ່ເດັກເກີດ.

## ການສ້າງຕັ້ງຖານະຄວາມເປັນພໍ່ຢູ່ໃນສານ

### ເມື່ອໃດສານຈຶ່ງຄວນສ້າງຕັ້ງຖານະຄວາມເປັນພໍ່?

ທ່ານສາມາດໄປຫາສານໄດ້ໃນເມື່ອທ່ານຫາກເຊື່ອວ່າຜູ້ເປັນພໍ່ອາດຈະເປັນຊາຍຊູ້ຫລາຍຄົນ.

### ເຫດຜົນຢ່າງອື່ນອີກເພື່ອໃຊ້ໃຫ້ສານທັງຫລາຍສ້າງຕັ້ງຖານະຄວາມເປັນພໍ່:

- ຖ້າຫາກຊາຍຫລືຍິງທີ່ບໍ່ແນ່ໃຈເຣື່ອງການເຊັນຄຳສັ່ງຂອງສານ
- ຖ້າຜົວຂອງຜູ້ຍິງນັ້ນຫາກບໍ່ເຕັມໃຈຈະເຊັນໜັງສືປະຕິເສດ



## ຂ້າພະເຈົ້າຈະເປີດສຳນວນຖານະຄວາມເປັນພໍ່ຢູ່ໃນສານໄດ້ແນວໃດ?

ທາງຣັດສາມາດກໍ່ຕັ້ງ [CS31] ຖານະຄວາມເປັນພໍ່ແກ່ເດັກຂອງທ່ານໄດ້ ຖ້າທ່ານຮ້ອງຂໍເອົາການບໍຣິການຕ່າງໆເພື່ອສ້າງຕັ້ງຖານະຄວາມເປັນພໍ່ກັບພະແນກ DCS. ໃຫ້ໂທຫາ DCS ໃນເລກ 800-442-KIDS (5437) ຫລືຫ້ອງການ DCS ທີ່ໃກ້ກັບທ່ານເພື່ອຂ່າວຂໍ້ມູນເພີ່ມເຕີມ.

ຖ້າຫ້ອງການ DCS ຮັບເອົາສຳນວນຂອງທ່ານ, ພວກເຮົາກໍ່ຈະສະເໜີສິ່ງສຳນວນຂອງທ່ານໄປຫາທະນາຍຝ່າຍໂຈດຂອງຄາວຕີ້. ທະນາຍຝ່າຍໂຈດຈະເຮັດໜ້າທີ່ແທນຕົວໃຫ້ລູກຂອງທ່ານ ແຕ່ບໍ່ສາມາດແທນຕົວໃຫ້ທ່ານໃນສານຫລືໃຫ້ຂໍ້ແນະນຳດ້ານກົດໝາຍໄດ້. ທະນາຍຝ່າຍໂຈດນັ້ນສາມາດຕອບຄຳຖາມຕ່າງໆທົ່ວໄປກ່ຽວກັບສຳນວນຖານະຄວາມເປັນພໍ່ຂອງທ່ານ. ທ່ານຈຳຕ້ອງບອກພວກເຮົາຮູ້ຖ້າເດັກຫາກໄດ້ຮັບເງິນຊ່ວຍເຫລືອມວນຊົນຂອງຣັດຫລືການຊ່ວຍເຫລືອດ້ານພະຍາບານ.

ຫ້ອງການ DCS ຍັງເອົ້າຫາສານທັງຫລາຍຂອງຊົນເຜົ່າໄດ້ນຳອີກເພື່ອສ້າງຕັ້ງຖານະຄວາມເປັນພໍ່ໃນສຳນວນຕ່າງໆສະເພາະເຣື່ອງຕາມຊົນເຜົ່າ.

ຄິດຄຳນຶງເຖິງການຈັກຖາມທະນາຍເພື່ອຕອບຄຳຖາມຕ່າງໆດ້ານກົດໝາຍ ແລະຕາງໜ້າໃຫ້ທ່ານໃນສານ. ຖ້າທ່ານບໍ່ຕ້ອງການໆບໍຣິການຕ່າງໆຂອງພວກເຮົາ, ທ່ານຫລືທະນາຍຂອງທ່ານອາດປະກອບຄຳຊຸທອນຕໍ່ສານເພື່ອຂັດຄ້ານການລົງມືປະຕິບັດເຣື່ອງກົດໝາຍບັງຄັບທີ່ກວມບົນສຳນວນຂອງທ່ານ.

## ຂ້າພະເຈົ້າຈະສ້າງຕັ້ງຖານະຄວາມເປັນພໍ່ໃນສານໄດ້ຢ່າງໃດ?

ຖ້າຣັດຫາກເປັນຝ່າຍພະຍາຍາມຈະສ້າງຕັ້ງຖານະຄວາມເປັນພໍ່, ຕາມທັມມະດາແລ້ວທະນາຍຝ່າຍໂຈດຂອງຄາວຕີ້ຈະເອົາໜັງສືແຈ້ງທາງກົດໝາຍນັ້ນໃຫ້ຜູ້ຊາຍທີ່ອາດເປັນພໍ່ຂອງເດັກທັງຫລາຍ. ທະນາຍຝ່າຍໂຈດຫລືສານຈະຮຽກຮ້ອງໃຫ້ຜູ້ທີ່ອາດເປັນແມ່, ເປັນພໍ່ທັງຫລາຍພ້ອມທັງເດັກກວດເຊື້ອສາຍພົວພັນຕ່າງໆ. ສານອາດສັ່ງການສ້າງຕັ້ງຖານະຄວາມເປັນພໍ່ຂຶ້ນ.

## ຄຳວ່າການກວດສືບເຊື້ອສາຍພົວພັນນັ້ນໝາຍຄວາມວ່າແນວໃດ ແລະຂ້າພະເຈົ້າຈຳຕ້ອງໄດ້ຖືກກວດບໍ່?

ເຊື້ອການມະພັນເປັນເຊື້ອເຍື່ອໄຍປະເພດໜຶ່ງໃນຮ່າງກາຍຂອງຄົນ. ເຊື້ອຕ່າງໆເຫລົ່ານີ້ແມ່ນສິ່ງທອດເຊື້ອການມະພັນຂອງພໍ່ໄປຫາລູກ. ການກວດເຊື້ອສາຍພົວພັນນັ້ນ ແມ່ນການວິເຄາະວິໃຈປຽບທຽບເຊື້ອການມະພັນຕ່າງໆ. ຖ້າເຊື້ອການມະພັນຕ່າງໆຫາກຖືກກັນ, ພໍ່ແມ່ແລະເດັກກໍ່ສະແດງວ່າມີສາຍພົວພັນກັນ. ການກວດເຊື້ອສາຍພົວພັນນັ້ນເປັນວິທີການກວດສອບສືບສາວຫາພໍ່ແມ່ທີ່ແນ່ນອນ.

ການກວດເຊື້ອສາຍພົວພັນນັ້ນ, ແມ່ນການວິເຄາະເບິ່ງທຸກພາກສ່ວນໃນຮ່າງກາຍຂອງຜູ້ເປັນພໍ່, ເປັນແມ່, ແລະເຍື່ອອະໄວຍະວະຂອງເດັກທີ່ເອົາອອກດ້ວຍການໃຊ້ກ້ານສຳລີແລະເອົາທາງໃນປາກຂອງເຂົາເຈົ້າ. ຫ້ອງທົດລອງວິໃຈວິທະຍາສາດ, ຈະຣາຍງາງແຈ້ງຜົນອອກມາ ໂດຍອະທິບາຍບອກວ່າຜູ້ຊາຍຄົນນັ້ນຢູ່ໃນຮູບການເປັນພໍ່ຂອງເດັກຕາມທາງຊີວະວິທະຍາ. ສ່ວນໃຫຍ່ແລ້ວ, ສານຈະຮຽກຮ້ອງການກວດເຊື້ອການມະພັນນີ້ ຖ້າຫາກມີຂໍ້ສົງໃສວ່າມີຊາຍຊູ້ຫລາຍຄົນອາດເປັນພໍ່ໄດ້.

## ການປະກອບການສ້າງຕັ້ງຖານະຄວາມເປັນພໍ່ຢູ່ສານນັ້ນ ມີການຄິດຄ່າຕ່າງໆໃດໜຶ່ງຢູ່ບໍ່?

- ຖ້າທະນາຍຝ່າຍໂຈດຂອງຄາວຕີ້ຫາກປະກອບການສ້າງຕັ້ງຖານະຄວາມເປັນພໍ່ຢູ່ສານໃນສຳນວນຂອງ DCS, ທ່ານບໍ່ໄດ້ຈ່າຍຄ່າທຳນຽມປະກອບເອກະສານ. ອາດມີຄ່າຫລາຍຢ່າງທີ່ກ່ຽວກັບການສ້າງຕັ້ງຖານະຄວາມເປັນພໍ່ຢູ່ໃນສານ.
- ຖ້າທ່ານຈ້າງທະນາຍ, ທ່ານຕ້ອງໄດ້ຮັບຜິດຊອບຈ່າຍເອງຄ່າທຳນຽມ ແລະຄ່າສານອື່ນໆ.
- ຖ້າຜູ້ຊາຍຄົນໃດຖືກຕັດສິນພິຈາຣະນາວ່າເປັນພໍ່, ສານອາດສັ່ງໃຫ້ລາວຈ່າຍຄ່າກວດສາຍສຳພັນທາງສາຍເລືອດຫລືຄ່າສານອື່ນໆ.

## ຍັງມີບາງຢ່າງອີກທີ່ທ່ານຈຳຕ້ອງຮູ້ໄວ້

## ຂ້າພະເຈົ້າຈະສ້າງຕັ້ງສິດທິຕ່າງໆໃນຖານະຄວາມເປັນພໍ່ໄດ້ແນວໃດເຊັ່ນສິດໃນການຄຸ້ມຄອງເດັກແລະການປັຽມປາມ?

ອຳນາດສານທີ່ນັ້ນທີ່ສາມາດກ່າວເຖີງບັນຫາຕ່າງໆໃນສິດການຄຸ້ມຄອງ ແລະການປັຽມປາມ. ເຣື່ອງນີ້ແມ່ນເຣັດໄດ້ໃນແຜນຄວາມເປັນພໍ່ແມ່. ຖ້າທ່ານຫລືບໍ່ແມ່ຝ່າຍອື່ນບໍ່ສາມາດລົງລອຍກັນໃນບັນຫາການຄຸ້ມຄອງເດັກຫລືການປັຽມປາມ, ໃຫ້ຕິດຕໍ່ຫາທະນາຍ, ຜູ້ໄກ່ເກັ່ຽເຣື່ອງ ຫລືຜູ້ໃຫ້ຄວາມສະດວກໃນສານ.

- ໃຫ້ລົມກັບກັບຜູ້ໄກ່ເກັ່ຽເຣື່ອງ ໂດຍໂທຫາ Resolution Washington, ສູນກາງຕ່າງໆຂອງກຸ່ມແກ້ຂໍ້ຂັດແຍ່ງທີ່ວຣັດ, ທີ່ 800-280-4770.
- ເພື່ອຊອກຫາຜູ້ອຳນວຍຄວາມສະດວກຂອງສານ, ໃຫ້ໂທຫາສະໝຽນສານຊັ້ນສູງທັງຫລາຍຕາມເຂດທ້ອງຖິ່ນຂອງທ່ານ.

**ເພື່ອຂ່າວຂໍ້ມູນເພີ່ມເຕີມ ໃຫ້ໂທຫາ DCS ແລະໃຫ້ຖາມເອົາປື້ມຂ່າວໃນຫົວຂໍ້ທີ່ວ່າ "ຂ້າພະເຈົ້າຈະເຣັດແນວໃດເພື່ອໃຫ້ຂ້າພະເຈົ້າໄດ້ພົບລູກຂອງຂ້າພະເຈົ້າ ຫລືໄດ້ພົບກັບເຂົາເຈົ້າເລື້ອຍຂຶ້ນກວ່າເກົ່າ? ການອູ້ມຊູລ້ຽງດູເດັກ, ການປ້ຽມປາມ, ແລະຄວາມຄຸ້ມຄອງເດັກ."**

## ຂ້າພະເຈົ້າຈະສ້າງຕັ້ງຖານະຄວາມເປັນພໍ່ໄດ້ບໍ່ ຖ້າຜູ້ເປັນພໍ່ຫລືແມ່ຫາກຢູ່ຕ່າງຣັດ?

ໄດ້, ພໍ່ຫລືແມ່ຢູ່ຣັດອື່ນກໍ່ສາມາດເຊັນຄຳສັ່ງຂອງສານໄດ້. ຣັດອື່ນກໍ່ເຮັດວຽກຮ່ວມກັບ DCS ເພື່ອໃຫ້ໄດ້ຄຳສັ່ງສານໃຫ້ແກ່ເດັກຜູ້ທີ່ເກີດໃນຫລືນອກຣັດວໍຊິງຕັນຄືກັນ.

## ແມ່ນໃຜຈະຊ່ວຍຂ້າພະເຈົ້າສ້າງຕັ້ງຖານະຄວາມເປັນພໍ່ຫລືຕອບຄຳຖາມຕ່າງໆຂອງຂ້າພະເຈົ້າ?

- ໃຫ້ໂທ 800-442-KIDS (5437) ຫລືເບິ່ງຢູ່ດ້ານຫລັງຂອງປຶ້ມຂ່າວສານຫົວນີ້ສຳຣັບເລກໂທຂອງຫ້ອງການ DCS ທີ່ຢູ່ໃກ້ກັບທ່ານ.
- ໃຫ້ລົມກັບທະນາຍ.
- ໃຫ້ໂທ 1-888-201-1014 ຫາໂຄງການ CLEAR (Coordinated Legal Education, Advice and Referral) ໂຄງການປະສານງານການສຶກສາກົດໝາຍ, ຣະບົບແນະນຳແລະສົ່ງຕໍ່.
- ຖ້າທ່ານຢູ່ໃນເຂດຄິງຄາວຕີ້, ໃຫ້ໂທຫາສະມາຄົມທະນາຍປະຈຳຄິງຄາວຕີ້ (King County Bar Association) ໃນເລກ 206-623-2551 ເພື່ອສອບຖາມເຣື່ອງຄ່າທະນາຍຊ່ວຍເຫລືອທີ່ຈ່າຍໃນຣາຄາຖືກ.

ຫ້ອງການ DCS ຕ່າງໆ

| | |
|---|---|
| **Everett** | **800-729-7580**<br>**425-438-4800** |
| **Fife** | **866-243-4449**<br>**253-922-0454** |
| **Kennewick** | **800-345-9981**<br>**509-374-2000** |
| **Olympia** | **800-345-9964**<br>**360-664-6900** |
| **Seattle** | **800-526-8658**<br>**206-341-7000** |
| **Spokane** | **800-345-9982**<br>**509-363-5000** |
| **Tacoma** | **800-345-9976**<br>**253-597-3700** |
| **Vancouver** | **800-345-9984**<br>**360-696-6100** |
| **Wenatchee** | **800-535-1113**<br>**509-886-6800** |
| **Yakima** | **800-441-0859**<br>**509-249-6000** |
| ສູນກາງໃຫຍ່ | **800-457-6202**<br>**360-664-5000** |

ສົ່ງຂໍ້ຄວາມທາງຄອມພິວເຕີ້
**(E-mail)** **dcs-cru@dshs.wa.gov**

Washington State
Department of Social
& Health Services

DCS Division of Child Support